# ສຳນວນການສຳຫລວດສືບສວນເຄສໂຄວິດ-19 ທາງອອນລາຍ໌

[ຈັ່ງຫວະເຜີ່ງ]

[ຄຳບັນຍາຍ] ສືບສວນເຄສແມ່ນທາງໜຶ່ງທີ່ຊ່ວຍຫຼຸດຜ່ອນການແຜ່ກະຈາຍຂອງໂຄວິດ-19

ເຈົ້າໜ້າທີ່ສາທາລະນະສຸກທີ່ໄດ້ຮັບການຝຶກອົບຮົມ ຕິດຕໍ່ກັບຄົນຜູ້ທີ່ມີຜົນກວດໂຄວິດ-19 ເປັນບວກ ແລະ ຖາມຄຳຖາມກັບພວກເຂົາ ເພື່ອຈະຊອກຫາຜູ້ອື່ນທີ່ໄດ້ໃກ້ຊິດກັບພວກເຂົາ. ຜູ້ທີ່ໃກ້ຊິດເຫຼົ່ານີ້ປັດຈຸບັນອາດຈະເປັນໂຄວິດ-19 ແລະ ຄວນທີ່ຈະພັກຢູ່ເຮືອນ.

ໂດຍປົກກະຕິ, ເຄສສືບສວນໄດ້ຖືກສຳພາດທາງໂທລະສັບ. ປັດຈຸບັນ, ທ່ານສາມາດເລືອກທີ່ຈະຕອບຄຳຖາມດຽວກັນເປັນສ່ວນຕົວ ຜ່ານການສຳຫລວດທາງອອນລາຍ໌.

ນີ້ແມ່ນທາງທີ່ດີທີ່ສຸດບໍ່? ຖ້າທ່ານບອກເບີໂທລະສັບມືຖືຂອງທ່ານໃນເວລາທີ່ທ່ານໄດ້ເຂົ້າກວດ, ພວກເຮົາຈະສົ່ງຂໍ້ຄວາມຫາທ່ານ ເພື່ອບອກໃຫ້ທ່ານຮູ້ວ່າທ່ານສາມາດປະກອບສ່ວນເຂົ້າໃນການສຳຫຼວດ!

ທຳອິດ, ພວກເຮົາຈະຕິດຕໍ່ຫາທ່ານ. ທ່ານສາມາດຕອບດ້ວຍຂໍ້ 1, 2, 3, ຫຼື 4 ຂຶ້ນກັບພາສາທີ່ທ່ານຮູ້ສຶກສະດວກທີ່ຈະໃຊ້. ພວກເຮົາຈະຖາມທີ່ຢູ່ອີເມວຂອງທ່ານ ແລະ ສົ່ງລີ້ງສຳຫຼວດ ເຂົ້າອິນບ໋ອກຂອງທ່ານ. ຖ້າທ່ານບໍ່ຕ້ອງການຕອບຂໍ້ຄວາມ, ທ່ານຈະໄດ້ຮັບໂທລະສັບຈາກເຈົ້າໜ້າທີ່ສາທາລະນະສຸກ.

ທ່ານສາມາດໃຊ້ເວລາຂອງທ່ານໃນການຕອບແບບສຳຫຼວດ. ໃນຕອນທ້າຍ, ທ່ານຈະໄດ້ຮັບຂໍ້ຄວາມທີ່ສຳຄັນກ່ຽວກັບວິທີການຫຼຸດຜ່ອນຄວາມສ່ຽງຂອງການສົ່ງຕໍ່ໂຄວິດ-19 ໃຫ້ແກ່ຄົນອື່ນ, ແລະ ລາຍລະອຽດຂອງບ່ອນຈະຂາຍສິ່ງຂອງເຄື່ອງກິນເຄື່ອງໃຊ້ຕ່າງໆໃນເຂດທ້ອງຖິ່ນໃຫ້ແກ່ທ່ານເຊັ່ນ ເຄື່ອງອຸປະໂພກ ແລະ ຢາ.

ພະແນກສາທາລະນະສຸກເຫັນວ່າເລື່ອງສ່ວນຕົວຂອງທ່ານເປັນເລື່ອງທີ່ສຳຄັນທີ່ສຸດ. ພວກເຮົາຈະບໍ່ຖາມຂໍເງິນ, ຂໍ້ມູນກ່ຽວກັບທະນາຄານ, ຫຼື ໝາຍເລກປະກັນສັງຄົມຂອງທ່ານ.

ຖ້າວ່າມີຜົນກວດເປັນບວກ ແລະ ມີຄຳຖາມ, ທ່ານສາມາດໂທຫາ 651-201-5689 ເພື່ອທີ່ຈະລົມກັບເຈົ້າໜ້າທີ່ສາທາລະນະສຸກ.

[ຈັ່ງຫວະເຜີ່ງ]

Minnesota Department of Health
Communications Office
PO Box 64975
St. Paul, MN 55164-0975
651-201-4989
health.communications@state.mn.us
www.health.state.mn.us

1/28/21 (Lao)

*ຕ້ອງການໄດ້ຮັບຂໍ້ມູນນີ້ເປັນຮູບແບບອື່ນ, ຈົ່ງໂທຫາ: 651-201-4989*